ແຜນງານບີຄວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

## Basic Education Quality and Access in Lao PDR









## MoES and Australia ensure all students receive the Lao language support they need when starting school.

## Media Report
**02-23 Sep 2024**

ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ, ຕາງໜ້າໃຫ້ລັດຖະບານອົດສະຕຣາລີ ແລະ ອົງການ USAID
Basic Education Quality and Access in Lao PDR is managed by Tetra Tech International Development,
on behalf of the Australian Government and the United States Agency for International Development (USAID).

## Summary table of all releases

| Date | Media Type | Media Name | Details |
|---|---|---|---|
| 2024-09-06 | Newspaper | Pathedlao | Page 7 |
| 2024-09-11 | Newspaper | Vientiane Times | Front and Page 2 |
| 2024-09-11 | Newspaper | Pathedlao | Front and Page 2 |
| 2024-09-18 | Newspaper | Vientiane Times | Front and Page 3 |
| 2024-09-19 | Newspaper | Vientiane Mai | Page 2 |
| 2024-09-05 | Social media | Pathedlao Facebook | 387K Followers |
| 2024-09-09 | Social media | Edu-Sport Daily News Facebook | 9.4K Followers |
| 2024-09-09 | Social media | New Education Magazine Facebook | 521K Followers |
| 2024-09-10 | Social media | Vientiane Business-Social Facebook | 4.5K Followers |
| 2024-09-10 | Social media | Vientiane Mai Facebook | 2.2K Followers |
| 2024-09-10 | Social media | Savannakhet Teacher Training College Facebook | 17K Followers |
| 2024-09-10 | Social media | Army Radio FM 99.7 Facebook | 22K Followers |
| 2024-09-12 | Social media | Edu-Sport TV Online Facebook | 67K Followers |
| 2024-09-13 | Social media | Information Media Centre Facebook | 11K Followers |
| 2024-09-16 | Social media | Kang Kai Teacher Training College Facebook | 976 Followers |
| 2024-09-18 | Social media | Vientiane Times Facebook | 74K Followers |
| 2024-09-23 | Social media | Tetra Tech International Development Services Facebook | 35K Followers |
| 2024-09-23 | Social media | Tetra Tech International Development Services Linked | 71K Followers |
| 2024-09-04 | Website | Pasaxon | Read article in Lao here |
| 2024-09-09 | Website | Education news | Read article in Lao here |
| 2024-09-09 | Website | BEQUAL | Read article in English here |
| 2024-09-09 | Website | KPL English | Read article in English here |
| 2024-09-09 | Website | KPL Lao | Read article in Lao here |
| 2024-09-11 | Website | Vientiane Times | |
| 2024-09-18 | Website | Vientiane Times | |
| 2024-09-10 | Radio | Army Radio FM 99.7 | |
| 2024-09-10 | Radio | Public Security Radio FM 101.5 | |
| 2024-09-10 | Radio | Lao Youth FM 90.00 MHZ | |
| 2024-09-10 | Radio | Lao National Radio FM 103.7 | |
| 2024-09-10 | Radio | Vientiane Radio FM 105.5 | |
| 2024-09-14 | Radio | Education news FM 103.7 MHZ | |
| 2024-09-02 | WhatsApp | MT-PT WhatsApp and FB groups | 19 groups with trainers +/- 713 members |

| | | | |
|---|---|---|---|
| 2024-09-02 | WhatsApp | PESS-DESB | 18 Provincial groups<br>426 members |
| 2024-09-02 | WhatsApp | Pre-Service Writing team | 8 TTCs and 2 universities<br>73 members |
| 2024-09-02 | WhatsApp | Target DESB | Teacher Dev Units in 30 target districts<br>64 members |
| 2024-09-02 | WhatsApp | Target TTC | Key coordinators from the 3 target TTCs 17 members |
| 2024-09-02 | WhatsApp | IPS | in targeted provinces-LNT, XKH, SVK- 8 Districts in XKH, 12 Districts |
| 2024-09-02 | WhatsApp | Teaching Standard Review group | MT-PT- 28 members |

## Pictures of articles in the media

| 2024-09-06 | Newspaper | Pathedlao | Page 7 |
|---|---|---|---|

# ຍົກລະດັບການນຳໃຊ້ສື່ການຮຽນ-ການສອນ ໃຫ້ຄູປະຖົມຢູ່ເມືອງແກ່ນທ້າວ





| 2024-09-11 | Newspaper | Vientiane Times | Front and Page 2 |
|---|---|---|---|

LAO PRESS IN FOREIGN LANGUAGES

WEDNESDAY SEPTEMB

**Inside**



**Lao-Thai border crossing in Saravan to be upgraded**
*[ Page 2 ]*



**New Lao language programme rolled out in primary schools**
*[ Page 2 ]*



# New Lao language programme rolled out in primary schools



A teacher introduces new teaching methods under the Spoken Lao Programme.

**Times Reporters**

The Ministry of Education and Sports has launched the new Spoken Lao Programme and made materials and teaching methods available to all Grade 1 classes in primary schools starting this school year.

In preparation for the national rollout, 184,680 colourful textbooks and 13,680 teacher guides, as well as supplementary teaching and learning materials, were distributed nationwide.

These materials have been provided to Grade 1 teachers and will be available for all schools with non-Lao speaking students that are implementing the Spoken Lao Programme.

The programme was launched to ensure that all children receive the Lao language support they need when starting school.

It was developed by the Research Institute for Educational Sciences at the Ministry of Education and Sports with support from the Australian government and the United States Agency for International Development, through the Basic Education Quality and Access in Laos (BEQUAL) programme.

Spoken Lao Programme lessons are taught in addition to regular timetabled lessons, with lessons complementing and linking directly with the regular Grade 1 Lao language curriculum lessons.

The lessons aim to develop children's oral Lao language skills through speaking and listening practice.

Director General of the Research Institute for Educational Sciences, Associate Prof. Dr Anoulom Vilayphone, said "Since 2019, the education ministry and Australia have been working to strengthen Lao language skills for children who cannot speak Lao when they start school.

The materials have been thoroughly tested in several provinces and subsequently improved since 2019.

The overwhelming positive results demonstrated that this new approach benefits children who are not yet competent speakers of Lao and helps them to acquire new vocabulary in a fun and effective manner.

The education ministry decided to make Spoken Lao materials and teaching methods available to all Grade 1 classes nationwide starting this school year, Dr Anoulom said. First Secretary at the Australian Embassy, Ms Vanessa Hegarty, said "Australia and the education ministry collaborated to pilot new teaching methods to increase the inclusion of all children in the education system, especially disadvantaged children who speak a language other than Lao at home."

Almost 40 percent of the Lao population speak a language other than Lao.

The programme is a great example of how a successful small pilot can become a programme approved for teaching nationwide.

Ms Hegarty said "Australia is proud to promote inclusive education and better learning outcomes for non-Lao speaking students."

Australia strongly believes that improving the learning outcomes for girls and boys, especially those experiencing disadvantage, will have long-term positive outcomes for the development of Laos, she added.

| 2024-09-11 | Newspaper | Pathedlao | Front and Page 2 |
|---|---|---|---|

ອ່ານຕໍ່ໜ້າ 2

# ນັກຮຽນຊົນເຜົ່າ ທີ່ບໍ່ເວົ້າພາສາລາວ ໃນຄອບຄົວ ຈະໄດ້ຮຽນຝຶກເວົ້າພາສາລາວ ໃນຊັ້ນ ປ 1

ຂປລ. ສປປ ລາວ ເປັນປະເທດທີ່ ອຸດົມສົມບູນທາງດ້ານວັດທະນະທຳ ແລະ ມີຄວາມຫລາກຫລາຍຂອງຊົນເຜົ່າ. ໃນນັ້ນ, ເກືອບ 40% ຂອງປະຊາກອນລາວ ເວົ້າພາສາເຜົ່າ ທີ່ບໍ່ແມ່ນພາສາລາວລຸ່ມ. ສະນັ້ນ, ຈຶ່ງເຮັດໃຫ້ນັກຮຽນ ຊັ້ນ ປ1 ສ່ວນຫລາຍ ໂດຍສະເພາະຜູ້ທີ່ມາຈາກເຂດຫ່າງໄກ ແລະ ດ້ອຍໂອກາດ ເມື່ອເລີ່ມເຂົ້າຮຽນ ຊັ້ນ ປ1 ຍັງບໍ່ທັນມີທັກສະການປາກເວົ້າພາສາລາວ ເຮັດໃຫ້ນັກຮຽນເຫລົ່ານີ້ ບໍ່ເຂົ້າໃຈສິ່ງທີ່ຄູເວົ້າ. ສະນັ້ນ, ນັບແຕ່ສົກຮຽນ 2024-2025 ເປັນຕົ້ນໄປ, ນັກຮຽນ ຊັ້ນ ປ1 ທີ່ບໍ່ເວົ້າພາສາລາວ ເປັນຫລັກໃນຄອບຄົວ ຈະໄດ້ຮຽນບົດ [illegible]

[illegible] ຊວງສຶກສາທິການ ແລະ ກິລາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ອົງການພັດທະນາສາກົນຂອງປະເທດສະຫະລັດອາເມລິກາ ໂດຍຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ).

ບົດຮຽນຝຶກເວົ້າພາສາລາວ ສາມາດຈັດຕັ້ງປະຕິບັດໃນທຸກ ຊັ້ນຮຽນ ປ1 ທົ່ວປະເທດ ຂຶ້ນກັບລະດັບພື້ນຖານພາສາຂອງນັກຮຽນ ເມື່ອເລີ່ມຕົ້ນເຂົ້າຮຽນ. ຄູສອນ ຊັ້ນ ປ1, ຜູ້ອຳນວຍການ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ [illegible]

ອ່ານຕໍ່ໜ້າ 2

[illegible]

ນັກຮຽນຊົນເຜົ່າ...

[illegible]

| 2024-09-11 | Newspaper | Vientiane Times | Front and Page 3 |
|---|---|---|---|

LAO PRESS IN FOREIGN LANGUAGES

WEDNESDAY SEPTEMBER

## Inside



Japan gives boost to agriculture through satellite technology [ Page 2 ]



Mekong flooding causes severe riverbank erosion in Bokeo [ Page 3 ]



Primary school teachers get lessons on Spoken Lao Programme [ Page 3 ]

Vientiane Times

# Primary school teachers get lessons on Spoken Lao Programme

Times Reporters

Teaching the new Spoken Lao Programme curriculum to non-Lao speaking students is challenging for primary school teachers, so they are taking part in a two-month training course to learn how to use the programme effectively.

The training session began in July and ends in the middle of this month, providing them with the tools they need to use the programme's materials.

A total of 63 master trainers trained 603 provincial trainers who then delivered 530 workshops to 14,524 Grade 1 teachers, primary school principals and pedagogical support providers, according to the Basic Education Quality and Access in Laos (BEQUAL) programme.

The master and provincial trainers have been delivering curriculum training since the introduction of the revised primary school curriculum in 2019. They have in-depth knowledge of the curriculum after leading training sessions on its use over the past five years.

The training course this summer included all Grade 1 teachers, even those who may not have non-Lao speaking students in their class, to ensure that all Grade 1 teachers can teach the Spoken Lao Programme when required.

One of the provincial trainers explained that participants learned about language teaching methods for children and effective ways to support their language learning.

Participants experienced some of the activities recommended in the programme and made paper puppets and practised their use with children.

The training was very hands-on and saw teachers preparing and delivering Spoken Lao Programme activities in micro-teaching sessions, while pedagogical support staff were learning about tools and resources to support the teachers.

Additional opportunities to provide support to Spoken Lao Programme teachers are being developed by the Ministry of Education and Sports.

A video explaining techniques to teach children who do not speak Lao as their first language is available on the Teacher Development Videos YouTube channel.

A second video demonstrating three main activities of the Spoken Lao Programme was filmed last week and will be released soon. A specific Spoken Lao Programme Teacher Support Pack is also under development.

The Ministry of Education and Sports and the Australian government have been working to strengthen Lao language skills for children who start school without being able to speak Lao.

The Spoken Lao Programme materials have been thoroughly tested in several provinces and subsequently improved since 2019.

The programme was recently officially launched nationwide, to ensure that all non-Lao speaking Grade 1 children receive the Lao language support they need when starting this school year.

The new programme was developed by the Ministry of Education and Sports of Laos with support from the Australian government and the United States Agency for International Development, through the Basic Education Quality and Access in Laos (BEQUAL) programme.



School principals and Grade 1 teachers practise some of the activities in the Spoken Lao Programme.




# ບົດວາສືບຕໍ່ສະໜັບສະໜູນການນຳໃຊ້ສື່ ການຮຽນ-ການສອນເຝິກເວົ້າພາສາລາວ ເພື່ອຊ່ວຍເຫຼືອນັກຮຽນ ຂັ້ນ ປ໑



● ລາວເປັນປະເທດທີ່ອຸດົມສົມບູນທາງດ້ານວັດທະນະທຳ ແລະ ມີຄວາມຫຼາກຫຼາຍ ມີ 4 ກຸ່ມຊົນເຜົ່າຫຼັກ ແລະ ມີ 50 ກວ່າພາສາເຜົ່າ ເກືອບ 40% ຂອງປະຊາກອນລາວເວົ້າພາສາເຜົ່າທີ່ບໍ່ແມ່ນພາສາລາວລຸ່ມ ນັກຮຽນ ຂັ້ນ ປ1 ສ່ວນຫຼາຍ ໂດຍສະເພາະ ຜູ້ທີ່ມາຈາກເຂດຫ່າງໄກ ແລະ ດ້ອຍໂອກາດ ເມື່ອເລີ່ມເຂົ້າຮຽນ ຂັ້ນ ປ1 ຍັງບໍ່ທັນມີທັກສະການປາກເວົ້າພາສາລາວທີ່ຈຳເປັນໃນການຮຽນ ເນື່ອງຈາກພາສາລາວລຸ່ມເປັນພາສາຫຼັກທີ່ສອນໃນໂຮງຮຽນ ນັກຮຽນເຫຼົ່ານີ້ຈະສາມາດຮຽນຮູ້ ແລະ ມີສ່ວນຮ່ວມໃນກິດຈະກຳຫ້ອງຮຽນໄດ້ຄືແນວໃດ ຖ້າພວກເຂົາບໍ່ເຂົ້າໃຈສິ່ງທີ່ຄູເວົ້າ.

ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົດສະຕຣາລີ ໄດ້ຮັບປະກັນໃຫ້ນັກຮຽນທຸກຄົນໄດ້ຮັບການສະໜັບສະໜູນດ້ານພາສາລາວທີ່ເຂົາເຈົ້າຕ້ອງການໃນເວລາເລີ່ມຕົ້ນເຂົ້າຮຽນ ນັບແຕ່ສົກຮຽນ 2024-2025 ເປັນຕົ້ນໄປ ນັກຮຽນ ຂັ້ນ ປ1 ໃນທົ່ວປະເທດ ໂດຍສະເພາະ ຜູ້ທີ່ມີຄວາມຕ້ອງການການສະໜັບສະໜູນເພີ່ມຕື່ມຈະມີໂອກາດໄດ້ຮຽນປຶ້ມຮຽນເຝິກເວົ້າພາສາລາວ ປຶ້ມຮຽນໃໝ່ນີ້ ຖືກພັດທະນາຂຶ້ນໂດຍສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ກະຊວງສຶກສາທິການ ແລະ ກິລາ (ສສກ) ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ອົງການພັດທະນາສາກົນຂອງປະເທດສະຫະລັດອາເມຣິກາ ໂດຍຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານໃນລາວ (ແຜນງານບີຄວາ).

ປຶ້ມຮຽນເຝິກເວົ້າພາສາລາວ ສາມາດຈັດຕັ້ງປະຕິບັດໃນທຸກຂັ້ນຮຽນ ປ1 ທົ່ວປະເທດຂຶ້ນກັບລະດັບພື້ນຖານພາສາຂອງນັກຮຽນເມື່ອເລີ່ມຕົ້ນເຂົ້າຮຽນ ຄູສອນ ຂັ້ນ ປ1 ຜູ້ອຳນວຍການ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ ຈະເລືອກວ່າຄວນສອນປຶ້ມຮຽນເຝິກເວົ້າພາສາລາວ ໃນໂຮງຮຽນ ຫຼື ບໍ່ ໂດຍອີງຕາມຄວາມຕ້ອງການຂອງນັກຮຽນ ຂັ້ນ ປ1 ປຶ້ມຮຽນເຝິກເວົ້າພາສາລາວ ແມ່ນປຶ້ມຮຽນເສີມນອກຈາກປຶ້ມຮຽນປົກກະຕິຕາມຕາຕະລາງຮຽນ ເຊິ່ງຈະມີປຶ້ມຮຽນທີ່ປະກອບຕື່ມ ແລະ ເຊື່ອມຕໍ່ໂດຍກົງກັບຫຼັກສູດ ການຮຽນ-ການສອນ ວິຊາພາສາລາວສຳລັບຂັ້ນ ປ1 ປຶ້ມຮຽນເຝິກເວົ້າພາສາລາວເນັ້ນໃສ່ການພັດທະນາທັກສະການເວົ້າພາສາລາວ ໂດຍຜ່ານການຊ່ວຍເຫຼືອໃນການເວົ້າ ແລະ ການຟັງ.

ທ່ານ ອານຸລົມ ວິໄລພອນ ຜູ້ອຳນວຍການ ສວສ ກ່າວວ່າ: ນັບແຕ່ປີ 2019 ເປັນຕົ້ນມາ ສສກ ແລະ ລັດຖະບານອົດສະຕຣາລີໄດ້ຮ່ວມມືເພື່ອສ້າງຄວາມເຂັ້ມແຂງດ້ານວິຊາພາສາລາວໃຫ້ນັກຮຽນທີ່ເລີ່ມເຂົ້າໂຮງຮຽນແຕ່ບໍ່ສາມາດເວົ້າພາສາລາວໄດ້ດີເທື່ອ ສື່ການຮຽນ-ການສອນ ເຝິກເວົ້າພາສາລາວທັງໝົດໄດ້ຖືກທົດສອບໃນຫຼາຍແຂວງ ແລະ ໄດ້ຮັບການປັບປຸງໄລຍະຕໍ່ມານັບແຕ່ປີ 2019 ປຶ້ມຮຽນມີຜົນໄດ້ຮັບໃນທາງບວກຫຼາຍດ້ານ ເຊິ່ງສະແດງໃຫ້ເຫັນວ່າວິທີການໃໝ່ນີ້ໃຫ້ຜົນປະໂຫຍດແກ່ນັກຮຽນທີ່ຍັງບໍ່ທັນມີຄວາມສາມາດເວົ້າພາສາລາວໄດ້ດີເທື່ອ ແລະ ຊ່ວຍໃຫ້ເຂົາເຈົ້າໄດ້ຮຽນຮູ້ຄຳສັບໃໝ່ຢ່າງມ່ວນຊື່ນ ພ້ອມທັງມີປະສິດທິພາບ ສະນັ້ນ ສສກ ໄດ້ອະນຸມັດໃຫ້ບັນດາສື່ ການຮຽນ-ການສອນ ແລະ ປຶ້ມຮຽນເຝິກເວົ້າພາສາລາວໄດ້ຖືກສອນໃຫ້ຫ້ອງຮຽນຂັ້ນ ປ1 ໃນທົ່ວປະເທດນັບແຕ່ສົກຮຽນນີ້ເປັນຕົ້ນໄປ.

ທ່ານນາງ ວາເນັດຊ້າ ເຣັກກາທີ້ ເລຂາເອກສະຖານທູດອົດສະຕຣາລີ ປະຈຳລາວກ່າວວ່າ: ລັດຖະບານອົດສະຕຣາລີ ແລະ ກະຊວງ ສສກ ໄດ້ຮ່ວມມືກັນທົດລອງວິທີການສິດສອນແບບໃໝ່ ເພື່ອເພີ່ມການເຂົ້າເຖິງຂອງເດັກທັງໝົດເຂົ້າໃນລະບົບການສຶກສາ ໂດຍສະເພາະເດັກນ້ອຍທີ່ດ້ອຍໂອກາດທີ່ເວົ້າພາສາອື່ນທີ່ບໍ່ແມ່ນພາສາລາວລຸ່ມຢູ່ເຮືອນ ປຶ້ມຮຽນເຝິກເວົ້າພາສາລາວ ເປັນຕົວຢ່າງທີ່ດີຂອງວິທີການທົດລອງຂະໜາດນ້ອຍທີ່ປະສົບຜົນສຳເລັດສາມາດກາຍເປັນປຶ້ມຮຽນທີ່ໄດ້ຮັບການອະນຸມັດສຳລັບສອນໃນທົ່ວປະເທດ ລັດຖະບານອົດສະຕຣາລີ ມີຄວາມພູມໃຈທີ່ໄດ້ສົ່ງເສີມການສຶກສາຮຽນຮ່ວມ ແລະ ຊຸກຍູ້ຜົນການຮຽນທີ່ດີຂຶ້ນສຳລັບນັກຮຽນທີ່ບໍ່ໄດ້ເວົ້າພາສາລາວລຸ່ມເປັນພາສາຫຼັກໃນຄອບຄົວ ອົດສະຕຣາລີ ເຊື່ອໝັ້ນຢ່າງຍິ່ງວ່າການປັບປຸງຜົນການຮຽນຂອງເດັກຍິງ ແລະ ເດັກຊາຍ ໂດຍສະເພາະ ຜູ້ທີ່ປະສົບກັບຄວາມດ້ອຍໂອກາດ ຈະມີຜົນດີໃນໄລຍະຍາວໃຫ້ແກ່ການພັດທະນາຂອງປະເທດລາວ.

ໃນການກະກຽມໃຫ້ແກ່ການຈັດຕັ້ງໃນທົ່ວປະເທດ ປຶ້ມແບບຮຽນເຝິກເວົ້າພາສາລາວທີ່ມີສີສັນສວຍງາມ 184.680 ຫົວ ປຶ້ມຄູ່ມືຄູພາສາລາວ 13.680 ຫົວ ພ້ອມທັງສື່ ການຮຽນ-ການສອນ ເສີມພາສາລາວ (ລວມມີ 13.680 ຊຸດ ປຶດນິທານ 27.200 ແຜ່ນ ຊຸດເກມບິງໂກ 27.200 ຊຸດ) ໄດ້ຖືກແຈກຢາຍໃຫ້ບັນດາໂຮງຮຽນໃນທົ່ວປະເທດ ສື່ການຮຽນ-ການສອນ ເຫຼົ່ານີ້ໄດ້ສະໜອງໃຫ້ແກ່ຄູສອນຂັ້ນ ປ1 ແລະ ຈະຖືກນຳໃຊ້ເພື່ອສອນປຶ້ມຮຽນເຝິກເວົ້າພາສາລາວໂຮງຮຽນທັງໝົດທີ່ມີນັກຮຽນທີ່ບໍ່ເວົ້າພາສາລາວໄດ້ດີເທື່ອ.

ການສອນຫຼັກສູດໃໝ່ມີຄວາມທ້າທາຍສະເພາະສຳລັບຄູ ການເຝິກອົບຮົມແບບເຝິກຕໍ່ໄດ້ເລີ່ມຕົ້ນໃນເດືອນກໍລະກົດ ແລະ ຈະດຳເນີນເຖິງກາງເດືອນກັນຍາ ເພື່ອໃຫ້ຄູ ຂັ້ນ ປ1 ຈະມີເຄື່ອງມື ເພື່ອສົ່ງເສີມການສອນທີ່ເຂົາເຈົ້າຕ້ອງການເພື່ອນຳໃຊ້ສື່ ການຮຽນ-ການສອນເຝິກເວົ້າພາສາລາວ ແລະ ເພື່ອຊ່ວຍເຫຼືອນັກຮຽນ ຂັ້ນ ປ1 ຄູເຝິກຫຼັກແຫຼ່ງ 63 ຄົນ (ຍິງ 41%) ໄດ້ເຝິກອົບຮົມໃຫ້ແກ່ຄູເຝິກຂັ້ນແຂວງ 603 ຄົນ ຈາກນັ້ນ ໄດ້ສົ່ງເຝິກອົບຮົມຕໍ່ອີກ 530 ຄັ້ງ ເປັນເວລາ 3 ວັນ ໃຫ້ຄູສອນ ຂັ້ນ ປ1 ຈຳນວນ 14.524 ຄົນ ຜູ້ອຳນວຍການໂຮງຮຽນຊັ້ນປະຖົມສຶກສາ ແລະ ຜູ້ເຮັດວຽກສຶກສານິເທດ ຄູເຝິກຫຼັກແຫຼ່ງ ແລະ ຄູເຝິກຂັ້ນແຂວງໄດ້ໃຫ້ການເຝິກອົບຮົມຫຼັກສູດ ການຮຽນ-ການສອນ ນັບແຕ່ການນຳສະເໜີຫຼັກສູດປະຖົມສຶກສາສະບັບປັບປຸງ ປີ 2019 ເຂົາເຈົ້າມີຄວາມຊຳນານໃນການອຳນວຍຄວາມສະດວກໃນການເຝິກອົບຮົມ ແລະ ມີຄວາມຮູ້ກ່ຽວກັບຫຼັກສູດຢ່າງເລິກເຊິ່ງ ເຂົາເຈົ້າໄດ້ຮັບການເຝິກອົບຮົມກ່ຽວກັບຫຼັກສູດສະບັບປັບປຸງເປັນເວລາ 5 ປີ ການເຝິກອົບຮົມລວມມີຄູສອນ ຂັ້ນ ປ1 ລວມທັງຄູສອນຜູ້ທີ່ອາດຈະບໍ່ມີນັກຮຽນບໍ່ເວົ້າພາສາລາວຢູ່ໃນຫ້ອງຮຽນຂອງເຂົາເຈົ້າ ເພື່ອຮັບປະກັນວ່າຄູຂັ້ນ ປ1 ທຸກຄົນສາມາດສອນປຶ້ມຮຽນເຝິກເວົ້າພາສາລາວໄດ້ຕາມຄວາມຕ້ອງການໃນອະນາຄົດ.

ການສະໜອງການສະໜັບສະໜູນຄູສອນປຶ້ມຮຽນເຝິກເວົ້າພາສາລາວ ເຊິ່ງເປັນປຶ້ມຮຽນທີ່ໄດ້ຖືກພັດທະນາໂດຍກະຊວງ ສສກ ນອກນີ້ມີວິດີໂອທີ່ບອກເຖິງ 5 ເຕັກນິກ ເພື່ອສອນນັກຮຽນຜູ້ທີ່ບໍ່ເວົ້າພາສາລາວ ເປັນພາສາຫຼັກໃນຄອບຄົວທີ່ສາມາດເບິ່ງໄດ້ທາງຊ່ອງຢູທູບ: ວິດີໂອສຳລັບການພັດທະນາຄູ Teacher Development Videos ອີກວິດີໂອທີ 2 ຈະສະແດງໃຫ້ເຫັນເຖິງ 3 ກິດຈະກຳຫຼັກຂອງປຶ້ມຮຽນເຝິກເວົ້າພາສາລາວ ເຊິ່ງໄດ້ໄປຖ່າຍທຳໃນອາທິດທີ່ຜ່ານມາ ແລະ ຈະອອກອາກາດໃຫ້ໄດ້ຮັບຊົມໄວໆນີ້ ພ້ອມທັງຍັງຈະມີຊຸດອຸປະກອນຊ່ວຍເຫຼືອຄູທີ່ເປັນໃນຖານຂອງປຶ້ມຮຽນດັ່ງກ່າວສະເພາະກຳລັງຢູ່ໃນຂັ້ນຕອນຂອງການສ້າງ.

ແຜນງານບີຄວາແມ່ນແຜນງານທີ່ນຳພາໂດຍກະຊວງ ສສກ ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ອົງການພັດທະນາສາກົນຂອງປະເທດສະຫະລັດອາເມຣິກາ (USAID) ແຜນງານໄດ້ສຸມໃສ່ການເສີມຂະຫຍາຍຜົນການຮຽນຂອງຊາວໜຸ່ມຂອງປະເທດ ໂດຍສະເພາະ ຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອ ແລະ ຜູ້ທີ່ດ້ອຍໂອກາດ ແຜນງານບີຄວາຍັງຈະສືບຕໍ່ສຸມໃສ່ການຮັບປະກັນຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສົ່ງເສີມການສຶກສາຮຽນຮ່ວມເຂົ້າໃນທຸກກິດຈະກຳ.

**ນຳສະເໜີໂດຍ: ແວ່ນຂາວ**



| 2024-09-05 | Pathedlao Facebook |
|---|---|

ປະເທດລາວ Pathedlao
September 5 at 10:27 AM ·

ສຳເລັດ ການນຳໃຊ້ສື່ການຮຽນ-ການສອນ
ໃນໂຄງການຝຶກເວົ້າພາສາລາວ ໃຫ້ຄູຢູ່ເມືອງແກ່ນທ້າວ

ຂປລ. ແຫຼ່ງຂ່າວຈາກ ແຂວງໄຊຍະບູລີ ໃຫ້ຮູ້ວ່າ: ຄູສອນຊັ້ນປະຖົມສຶກສາ ທັງພາກລັດ ແລະ ເອກະຊົນ ເມືອງແກ່ນທ້າວ ແຂວງໄຊຍະບູລີ 100 ກວ່າຄົນ ຍິງ 30 ຄົນ ສຳເລັດການຝຶກອົບຮົມແນະນຳ ການນຳໃຊ້ສື່ການຮຽນ-ການສອນ ໃນ ໂຄງການຝຶກເວົ້າພາສາລາວ ແລະ ຄູ່ມື ວິຊາ ພາສາລາວ ສະບັບປັບປຸງໃໝ່ ປີທີ 1 ເມື່ອບໍ່ດົນມານີ້ ທີ່ໂຮງຮຽນປະຖົມ ສົມບູນໂພນສະຫວ່າງ ເມືອງແກ່ນທ້າວ.
ຈຸດປະສົງຂອງການຝຶກອົບຮົມຄັ້ງນີ້, ເພື່ອໃຫ້ຜູ້ເຂົ້າຮ່ວມ ໄດ້ແລກປ່ຽນບົດຮຽນ, ມີຄວາມເຂົ້າໃຈ ກ່ຽວກັບທິດສະດີການສອນ, ເນື້ອໃນຫຼັກສູດປຶ້ມແບບຮຽນ, ປຶ້ມຄູ່ມື ແລະ ການສັງເກດການຝຶກເວົ້າພາສາລາວ ແລະ ຄູ່ມືວິຊາພາສາລາວ ສະບັບປັບປຸງໃໝ່ ຊັ້ນປະຖົມສຶກສາ ປີທີ 1 ໃຫ້ຄ່ອງແຄ້ວ, ສາມາດນຳໃຊ້ວິທີສອນ, ການຈັດກິດຈະກຳ, ການຮຽນ-ການສອນ ໃຫ້ເໝາະສົມກັບຕຳລາໃໝ່, ການບັນທຶກຂອງນັກຮຽນ, ວິທີການນຳໃຊ້ສື່ການຮຽນ-ການສອນ ແລະ ການສັງເກດການສອນ ຢ່າງມີປະສິດທິຜົນ ແລະ ສາມາດນຳເອົາຄວາມຮູ້ຈາກການຝຶກອົບຮົມ ໄປຝຶກຕໍ່ໃຫ້ຄູສອນຢູ່ພາຍໃນໂຮງຮຽນ ຫຼື ຈັດຕັ້ງການຮຽນ-ການສອນ ໃຫ້ບັນລຸຕາມຈຸດປະສົງຂອງຫຼັກສູດ ເພື່ອເຮັດໃຫ້ການສອນຂອງຄູ ແລະ ການຮຽນຂອງນັກຮຽນດີຂຶ້ນ ທັງຮັບປະກັນດ້ານຄຸນນະພາບ.
ຕະຫຼອດໄລຍະ 4 ວັນ ຂອງການຝຶກອົບຮົມ ວິທະຍາກອນ ໄດ້ນຳພາ ນັກສຳມະນາກອນ ສຶກສາຮຽນຮູ້ ແລະ ທຳຄວາມເຂົ້າໃຈ ກ່ຽວກັບວິທີການສອນ ໂດຍນຳໃຊ້ປຶ້ມແບບຮຽນ ແລະ ຄູ່ມື ແນະນຳສະພາບລວມ ກ່ຽວກັບສື່ການຮຽນ-ການສອນ ຝຶກເວົ້າພາສາລາວ ແລະ ຄູ່ມື ວິຊາພາສາລາວ ສະບັບປັບປຸງໃໝ່, ສຶກສາຄົ້ນຄວ້າວິທີການຮຽນ-ການສອນ ແບບເນັ້ນການຊ່ວຍເຫຼືອ ແລະ ຊຸກຍູ້ນັກຮຽນໃນການຮຽນພາສາລາວ ໂດຍເອົານັກຮຽນເປັນໃຈກາງ ໃນການເຮັດກິດຈະກຳຕ່າງໆ, ຮຽນຮູ້ ແລະ ທຳຄວາມເຂົ້າໃຈ ກ່ຽວກັບເນື້ອໃນປຶ້ມແບບຮຽນ ແລະ ຄູ່ມືຄູ ເພື່ອຂະຫຍາຍເນື້ອໃນທິດສົ່ງປະຕິບັດ ແລະ ສະທ້ອນຄືນ, ການຮຽນຄຳສັບໃໝ່ ແລະ ກິດຈະກຳ ກ່ຽວກັບບົດເລື່ອງ, ຄົ້ນຄວ້າ ແລະ ຮຽນຮູ້ດ້ານການຮຽນ-ການສອນ ການວັດ ແລະ ປະເມີນຜົນ ເພື່ອປັບປຸງຄຸນນະພາບການຮຽນ-ການສອນ ໃນການເວົ້າພາສາລາວ, ຄົ້ນຄວ້າ ແລະ ຮຽນຮູ້ດ້ານການຮຽນ-ການສອນ ແບບເປັນກຸ່ມ ແລະ ສັງເກດການສອນ, ຂັ້ນຕອນການຮຽນຮູ້ກ່ຽວກັບສຽງ, ການຮຽນຈົດໝາຍ ແລະ ຄຳສັບໃນພາສາລາວ, ຄົ້ນຄວ້າ, ແນະນຳ ແລະ ຝຶກປະຕິບັດ ຖາມ-ຕອບ.



| 2024-09-09 | Edu-Sport Daily News Facebook |
|---|---|

ໜັງສືພິມສຶກສາ, ວິທະຍາສາດ ແລະ ກິລາ ອອນລາຍ
23 hours ago ·

ສສກ ຮ່ວມກັບ ລັດຖະບານອົດສະຕຣາລີ ຮັບປະກັນໃຫ້ນັກຮຽນໄດ້ຮັບການສົ່ງເສີມພາສາລາວ ທີ່ເຂົາເຈົ້າຕ້ອງການເວລາເລີ່ມຕົ້ນເຂົ້າຮຽນ
+++++++++++++++++++++++++++++
ສປປ ລາວ ເປັນປະເທດທີ່ອຸດົມສົມບູນທາງດ້ານວັດທະນະທຳ ແລະ ມີຄວາມຫຼາກຫຼາຍ, ມີ 4 ກຸ່ມຊົນເຜົ່າຫຼັກ ແລະ ມີ 50 ກວ່າພາສາເຜົ່າ, ເກືອບ 40% ຂອງປະຊາກອນລາວເວົ້າພາສາເຜົ່າທີ່ບໍ່ແມ່ນພາສາລາວລາວລຸ່ມ. ນັກຮຽນ ຊັ້ນ ປ.1 ສ່ວນຫຼາຍ ໂດຍສະເພາະຜູ້ທີ່ມາຈາກເຂດຫ່າງໄກສອກຫຼີກ ແລະ ດ້ອຍໂອກາດ ເມື່ອເລີ່ມເຂົ້າຮຽນ ຊັ້ນ ປ. 1 ຍັງບໍ່ທັນມີທັກສະການປາກເວົ້າພາສາລາວທີ່ຈຳເປັນໃນການຮຽ... See more






| 2024-09-09 | New Education Magazine Facebook |
|---|---|

**ວາລະສານ "ສຶກສາໃໝ່"**
23h ·

ສສກ ຮ່ວມກັບ ລັດຖະບານອົດສະຕຣາລີ ຮັບປະກັນໃຫ້ນັກຮຽນໄດ້ຮັບການສົ່ງເສີມພາສາລາວ ທີ່ເຂົາເຈົ້າຕ້ອງການເວລາເລີ່ມຕົ້ນເຂົ້າຮຽນ

++++++++++++++++++++++++++

ສປປ ລາວ ເປັນປະເທດທີ່ອຸດົມສົມບູນທາງດ້ານວັດທະນະທຳ ແລະ ມີຄວາມຫຼາກຫຼາຍ, ມີ 4 ກຸ່ມຊົນເຜົ່າຫຼັກ ແລະ ມີ 50 ກວ່າພາສາເຜົ່າ, ເກືອບ 40% ຂອງປະຊາກອນລາວເວົ້າພາສາເຜົ່າທີ່ບໍ່ແມ່ນພາສາລາວລາວລຸ່ມ. ນັກຮຽນ ຂັ້ນ ປ.1 ສ່ວນຫຼາຍ ໂດຍສະເພາະຜູ້ທີ່ມາຈາກເຂດຫ່າງໄກສອກຫຼີກ ແລະ ດ້ອຍໂອກາດ ເມື່ອເລີ່ມເຂົ້າຮຽນ ຂັ້ນ ປ. 1 ຍັງບໍ່ທັນມີທັກສະການປາກເວົ້າພາສາລາວທີ່ຈຳເປັນໃນການຮຽນ ເນ... See more




| 2024-09-10 | Vientiane Business-Social Facebook |
|---|---|

**ວຽງຈັນທຸລະກິດ-ສັງຄົມ**
3h ·

ສສກ ອະນຸມັດນຳໃຊ້ສື່ການຮຽນ-ການສອນ ບົດຮຽນການເຝິກເວົ້າພາສາລາວໃຫ້ແກ່ຫ້ອງຮຽນ ຂັ້ນ ປ1 ໃນສົກຮຽນນີ້ ພ້ອມກັນທົ່ວປະເທດ

........................................

ນັບແຕ່ສົກຮຽນ 2024-2025 ເປັນຕົ້ນໄປ ນັກຮຽນ ຂັ້ນ ປ1 ໃນທົ່ວປະເທດ ໂດຍສະເພາະຜູ້ທີ່ມີຄວາມຕ້ອງການການສະໜັບສະໜູນເພີ່ມຕື່ມ ຈະມີໂອກາດໄດ້ຮຽນບົດຮຽນເຝິກເວົ້າພາສາລາວ ບົດຮຽນໃໝ່ນີ້ ຖືກພັດທະ ນາຂຶ້ນໂດຍ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ກະຊວງສຶກສາທິການ ແລະ ກິລາ (ສສກ) ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ອົງການພັດທະນາສາກົນຂອງປະເທດສ... See more



| 2024-09-10 | Vientiane Mai Facebook |
|---|---|




| 2024-09-10 | Savannakhet Teacher Training College Facebook |
|---|---|



| 2024-09-10 | Army Radio FM 99.7 Facebook |
|---|---|

ວິທະຍຸກະຈາຍສຽງກອງທັບປະຊາຊົນລາວ FM 99,7 MHz
September 10 at 10:07 AM ·

ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົດສະຕຣາລີ ສະໜັບສະໜູນສື່ການຮຽນການສອນເພື່ອສົ່ງເສີມ ການຝຶກເວົ້າພາສາລາວໃຫ້ນັກຮຽນ ຊັ້ນປ 1 ບັນດາໂຮງຮຽນໃນທົ່ວປະເທດ.
**********************************************

ນັບແຕ່ສົກຮຽນນີ້ເປັນຕົ້ນໄປ, ນັກຮຽນ ຊັ້ນ ປ 1 ໃນທົ່ວປະເທດ ໂດຍສະເພາະຜູ້ທີ່ມີຄວາມຕ້ອງການສະໜັບສະໜູນ ເພີ່ມຕື່ມຈະມີໂອກາດໄດ້ຮຽນບົດຮຽນຝຶກເວົ້າພາສາລາວ. ບົດຮຽນໃໝ່ນີ້ຖືກພັດທະນາຂຶ້ນ ໂດຍສະຖາບັນຄົ້ນຄວ້າ ວິທະຍາສາດການສຶກສາ (ສວສ), ກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ (ສສກ) ໂດຍໄດ້ຮັບການ ສະໜັບສະໜູນຈາ... See more



| 2024-09-12 | Edu-Sport TV Online Facebook |
|---|---|

Edu-Sport TV online
September 11 at 10:49 AM ·

ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົດສະຕຣາລີ ໄດ້ຮັບປະກັນໃຫ້ນັກຮຽນທຸກຄົນໄດ້ຮັບການ ສະໜັບສະໜູນດ້ານພາສາລາວທີ່ເຂົາເຈົ້າຕ້ອງການໃນເວລາເລີ່ມຕົ້ນເຂົ້າຮຽນ.

ອ່ານຂ່າວໄດ້ທີ່ລິ້ງນີ້:
https://bequal-laos.org/.../ministry-of-education-and.../



You, Tik Chandaraphone, Khamthilat Sone and 20 others — 2 shares

| 2024-09-13 | Information Media Centre Facebook |
|---|---|

ສູນໂຄສະນາຂ່າວສານ ການສຶກສາ ແລະ ກິລາ
6 days ago ·

ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົດສະຕຣາລີ ໄດ້ຮັບປະກັນໃຫ້ນັກຮຽນທຸກຄົນໄດ້ຮັບການສະໜັບສະໜູນດ້ານພາສາລາວທີ່ເຂົາເຈົ້າຕ້ອງການໃນເວລາເລີ່ມຕົ້ນເຂົ້າຮຽນ.
ອ່ານຂ່າວຕໍ່ໄດ້ທີ່ລິ້ງນີ້:



BEQUAL-LAOS.ORG
**ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົດສະຕຣາລີ ໄດ້ຮັບປະກັນໃຫ້ນັກຮຽນທຸກຄົນໄດ້ຮັບການ**

| 2024-09-16 | Kang Kai Teacher Training College Facebook |
|---|---|

ວິທະຍາໄລຄູ ຄັງໄຂ
3 days ago ·

ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົດສະຕຣາລີ ໄດ້ຮັບປະກັນໃຫ້ນັກຮຽນທຸກຄົນໄດ້ຮັບການສະໜັບສະໜູນດ້ານພາສາລາວທີ່ເຂົາເຈົ້າຕ້ອງການໃນເວລາເລີ່ມຕົ້ນເຂົ້າຮຽນ.
ອ່ານຂ່າວຕໍ່ໄດ້ທີ່ລິ້ງນີ້:
https://bequal-laos.org/.../ministry-of-education-and.../



| 2024-09-18 | Vientiane Times Facebook |
|---|---|

Vientiane Times
a day ago ·

Primary school teachers get lessons on Spoken Lao Programme

Teaching the new Spoken Lao Programme curriculum to non-Lao speaking students is challenging for primary school teachers, so they are taking part in a two-month training course to learn how to use the programme effectively.... (Continue to read)
https://www.vientianetimes.org.la/.../Cur_181_primary_y24...



You and 26 others 7 comments 3 shares

| 2024-09-23 | Tetra Tech International Development Services Facebook and LinkedIn |
|---|---|

Tetra Tech International Development Services
September 23 at 1:00 AM ·

This school year marks the nationwide launch of BEQUAL's Spoken Lao Program (SLP) for Grade 1 students in Lao PDR who do not speak Lao as their first language.

Managed by the Ministry of Education and Sports of Lao PDR and supported by the Australian Government and USAID, the SLP aims to ensure all students receive the language support they need from the start.

What makes SLP special? ... **See more**



Tetra Tech International Development
69,520 followers
1w •

This school year marks the nationwide launch of BEQUAL's Spoken Lao Program (SLP) for Grade 1 students in Lao PDR who do not speak Lao as their first ...more



13

| 2024-09-04 | Pasaxon Website |
| --- | --- |

ປະຊາຊົນ
ສຽງຂອງສູນກາງພັກ ປະຊາຊົນ ປະຕິວັດລາ
ຖະໜົນກຳແພງເມືອງ ນະຄອນຫຼວງວຽງຈັນ ໂທລະສັບ: 021 336111 ແຟັກ: 021 3361
ຕູ້ ປ.ນ 1110 http://www.pasaxon.org.la E-mail: pasaxonn@yahoo.com



## ແກ່ນທ້າວ ສຳເລັດຊຸດຝຶກອົບຮົມການນຳໃຊ້ສື່ການຮຽນ-ການສອນ ຄູ່ມືພາສາລາວ.

04-09-2024 12:32:17 ເຜີຍແຜ່ໂດຍ: Khamphan

ເມືອງແກ່ນທ້າວ ແຂວງໄຊຍະບູລີ ໄດ້ສຳເລັດຊຸດຝຶກອົບຮົມແນະນຳການນຳໃຊ້ສື່ການຮຽນ-ການສອນ ໃນໂຄງການຝຶກເວົ້າພາສາລາວ ແລະ ຄູ່ມື ວິຊາພາສາລາວ ສະບັບປັບປຸງໃໝ່ ປີທີ 1 ເມື່ອບໍ່ດົນຜ່ານມານີ້ ຢູ່ທີ່ໂຮງຮຽນປະຖົມສົມບູນໂພນສະຫວ່າງ. ໂດຍການເປັນກຽດເຂົ້າຮ່ວມຂອງທ່ານ ນາວອນ ສອນສຸພາບ ຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ, ມີຄູຝຶກ, ຄູສອນ ປໍ 1 ທັງພາກລັດ ແລະ ເອກະຊົນຢູ່ພາຍໃນເມືອງເຂົ້າຮ່ວມ 100 ກວ່າທ່ານ.

ຝຶກອົບຮົມຄັ້ງນີ້, ແມ່ນເພື່ອເຮັດໃຫ້ຄູ-ອາຈານທີ່ເຂົ້າຮ່ວມ ໄດ້ແລກປ່ຽນບົດຮຽນ, ມີຄວາມເຂົ້າໃຈກ່ຽວກັບທິດສະດີການສອນ, ເນື້ອໃນຫຼັກສູດປຶ້ມແບບຮຽນ, ປຶ້ມຄູ່ມື ແລະ ການສັງເກດການຝຶກເວົ້າພາສາລາວ ແລະ ຄູ່ມືວິຊາພາສາລາວ ສະບັບປັບປຸງໃໝ່ ຊັ້ນປະຖົມສຶກສາ ປີທີ 1 ໃຫ້ຄ່ອງແຄ້ວ, ສາມາດນຳໃຊ້ວິທີສອນ, ການຈັດກິດຈະກຳ, ການຮຽນ-ການສອນ ໃຫ້ເໝາະສົມກັບຕຳລາໃໝ່, ການບັນທຶກຂອງນັກຮຽນ, ວິທີການນຳໃຊ້ສື່ການຮຽນ- ການສອນ ແລະ ການສັງເກດການສອນ ຢ່າງມີປະສິດທິຜົນ ແລະ ສາມາດນຳເອົາຄວາມຮູ້ຈາກການຝຶກອົບຮົມ ໄປຝຶກຕໍ່ໃຫ້ຄູສອນຢູ່ພາຍໃນໂຮງຮຽນ ຫຼື ຈັດຕັ້ງການຮຽນ-ການສອນ ໃຫ້ບັນລຸຕາມຈຸດປະສົງຂອງຫຼັກສູດ, ເຮັດໃຫ້ການສອນຂອງຄູ ແລະ ການຮຽນຂອງນັກຮຽນດີຂຶ້ນ ຮັບປະກັນທາງດ້ານຄຸນນະພາບ.

(ຂ່າວ: ເມືອງແກ່ນທ້າວ)

| 2024-09-09 | BEQUAL Website |
|---|---|

# Ministry of Education and Australia ensure all students receive the Lao language support they need when starting school

POSTED ON 9 SEPTEMBER 2024


SLP is full of engaging activities such as role play

**Nationwide launch of the new Spoken Lao Program for non-Lao speaking Grade 1 students**

Lao PDR is a culturally rich and diverse country, with four main ethnolinguistic groups incorporating over 50 languages. Almost 40% of the Lao population speak a language other than Lao. Many grade 1 students, especially those from remote and disadvantaged areas, begin their first year of school without the necessary oral Lao language skills needed to learn, given that Lao language is the language of instruction. How can these students effectively learn and participate in classroom activities if they don't understand the teacher?

Starting this school year, grade 1 students across the country who need this additional support will have the opportunity to participate in the Spoken Lao Program (SLP). This new program was developed by the Research Institute for Educational Sciences (RIES) in the Ministry of Education and Sports of Lao PDR (MoES) with support from the Australian Government and the United States Agency for International Development, through the Basic Education Quality and Access in Lao PDR (BEQUAL) program. The SLP can be implemented in all grade 1 classes nationwide depending on the language background of the students enrolled. Grade 1 teachers, principals and districts will decide whether SLP should be taught in a school based on the needs of the enrolled grade 1 students. SLP lessons are taught in addition to regular timetabled lessons with lessons complementing and linking directly with the regular Lao language curriculum lessons for grade 1. The SLP lessons focus on developing oral Lao language skills through supporting speaking and listening practice.

Associate Professor Dr Anoulom Vilayphone, Director General of RIES said ***"Since 2019, the MoES and Australia have been working together to strengthen Lao language skills for students starting school without speaking Lao. The SLP materials have been thoroughly tested in several provinces and subsequently improved since 2019. The overwhelming positive results demonstrated that this new approach benefits students who are not yet competent speakers of Lao language and helps them acquire new vocabulary in a fun and effective manner. The Ministry decided to make Spoken Lao materials and teaching method available to all Grade 1 classes nationwide starting with this school year".***


Teacher and students use SLP pictures cards to help students learn new vocabulary


Teacher providing support during a speaking practice activity with the new SLP materials

Ms Vanessa Hegarty, First Secretary, Australian Embassy, said ***"Australia and the MoES collaborated to pilot new teaching methods to increase inclusion of all children in the education system, especially disadvantaged children who speak another language other than Lao at home. The SLP is a great example of how a successful small pilot can become a program approved for teaching nationwide."***

In preparation for the national roll out, 184,680 colorful textbooks and 13,680 teacher guides, as well as supplementary teaching and learning materials (13,680 flashcard sets, 27,200 story cards and 27,200 bingo game sets) were distributed nationwide. These materials have been provided to grade 1 teachers and will be available for all schools with non-Lao speaking students who are implementing the SLP.

Teaching a new curriculum is always challenging for teachers. Cascade training started in July and will last until mid-September to equip grade 1 teachers with the tools they need to use the SLP materials and support grade 1 students. 63 Master Trainers (41% female) trained 603 Provincial Trainers who then delivered 530 workshops of 3 days for 14,524 grade 1 teachers, primary school principals and pedagogical support providers. The Master and Provincial Trainers have been delivering curriculum training since the introduction of the revised primary curriculum in 2019; they are skilled in facilitating training and with in-depth curriculum knowledge, gained conducting training on the revised curriculum for five years. The training included all grade 1 teachers, even the teachers who may not have non-Lao speaking students in their class, to ensure that all grade 1 teachers can provide SLP when required in the future.

One of the Provincial Trainers explains ***"On Day 1, participants learned about language teaching techniques for children and effective methods to support their students' language learning. They also became familiar with the SLP teaching and learning materials. On Day 2, participants experienced some activities of the program. They also created a paper puppet and practiced using it for an SLP activity demonstration. The Day 3 was also very active and hands-on with teachers preparing and delivering SLP activities in microteaching sessions, while pedagogical support staff were learning about tools and resources to support SLP teachers."***

Additional opportunities to provide support to SLP teachers are being developed by the Ministry. A video explaining five techniques to teach students who do not speak Lao as their first language is already available on **ວິດີໂອສຳລັບການພັດທະນາຄູ Teacher Development Videos YouTube channel**. A second video demonstrating three main activities of the Spoken Lao Program was filmed last week and will be released soon. A specific SLP Teacher Support Pack is also under development.


All grade 1 teachers, primary principals and pedagogical support providers received training on SLP


SLP is designed to support students who do not speak Lao well when entering grade 1


Testing results in 21 target districts demonstrated the effectiveness of SLP

Ms Hegarty concluded ***"Australia is proud to promote inclusive education and better learning outcomes for non-Lao speaking students. Australia strongly believes that improving the learning outcomes for girls and boys, especially those experiencing disadvantage, will have long-term positive outcomes for the development of Laos."***

BEQUAL is a program led by the Ministry of Education and Sports with support from the Australian Government and the United States Agency for International Development (USAID). The program focuses on enhancing educational outcomes for the nation's youth, especially the vulnerable and disadvantaged. BEQUAL is focused on ensuring gender equality and promoting inclusive education across all activities.

# Ministry of Education, Australia ensure all students receive Lao language support they need when starting school

09/09/2024 14:37

Email Print 1156 Like Share

1 Like Share

**KPL** **The Lao PDR is a culturally rich and diverse country, with four main ethnolinguistic groups incorporating over 50 languages. Almost 40% of the Lao population speak a language other than Lao. Many grade 1 students, especially those from remote and disadvantaged areas, begin their first year of school without the necessary oral Lao language skills needed to learn, given that Lao language is the language of instruction. How can these students effectively learn and participate in classroom activities if they don't understand the teacher?**



Nationwide launch of the new Spoken Lao Programme for non-Lao speaking Grade 1 students

(KPL) The Lao PDR is a culturally rich and diverse country, with four main ethnolinguistic groups incorporating over 50 languages.

Almost 40% of the Lao population speak a language other than Lao. Many grade 1 students, especially those from remote and disadvantaged areas, begin their first year of school without the necessary oral Lao language skills needed to learn, given that Lao language is the language of instruction.

How can these students effectively learn and participate in classroom activities if they don't understand the teacher?

Starting this school year, grade 1 students across the country who need this additional support will have the opportunity to participate in the Spoken Lao Programme (SLP). This new programme was developed by the Research Institute for Educational Sciences (RIES) in the Ministry of Education and Sports of the Lao PDR (MoES) with support from the Australian Government and the United States Agency for International Development, through the Basic Education Quality and Access in the Lao PDR (BEQUAL) programme. The SLP can be implemented in all grade 1 classes nationwide depending on the language background of the students enrolled.

Grade 1 teachers, principals and districts will decide whether SLP should be taught in a school based on the needs of the enrolled grade 1 students.

SLP lessons are taught in addition to regular timetabled lessons with lessons complementing and linking directly with the regular Lao language curriculum lessons for grade 1.

The SLP lessons focus on developing oral Lao language skills through supporting speaking and listening practice.

Assoc. Prof. Dr. Anoulom Vilayphone, Director General of RIES said, "Since 2019, the MoES and Australia have been working together to strengthen Lao language skills for students starting school without speaking Lao.

The SLP materials have been thoroughly tested in several provinces and subsequently improved since 2019.

The overwhelming positive results demonstrated that this new approach benefits students who are not yet competent speakers of Lao language and helps them acquire new vocabulary in a fun and effective manner.

The Ministry decided to make Spoken Lao materials and teaching method available to all Grade 1 classes nationwide starting with this school year".

Ms Vanessa Hegarty, First Secretary, Australian Embassy, said "Australia and the MoES collaborated to pilot new teaching methods to increase inclusion of all children in the education system, especially disadvantaged children who speak another language other than Lao at home.

The SLP is a great example of how a successful small pilot can become a programme approved for teaching nationwide."



In preparation for the national rollout, 184,680 colorful textbooks and 13,680 teacher guides, as well as supplementary teaching and learning materials (13,680 flashcard sets, 27,200 story cards and 27,200 bingo game sets) were distributed nationwide. These materials have been provided to grade 1 teachers and will be available for all schools with non-Lao speaking students who are implementing the SLP.

Teaching a new curriculum is always challenging for teachers. Cascade training started in July and will last until mid-September to equip grade 1 teachers with the tools they need to use the SLP materials and support grade 1 students.

63 Master Trainers (41% female) trained 603 Provincial Trainers who then delivered 530 workshops of 3 days for 14,524 grade 1 teachers, primary school principals and pedagogical support providers. The Master and Provincial Trainers have been delivering curriculum training since the introduction of the revised primary curriculum in 2019; they are skilled in facilitating training and with in-depth curriculum knowledge, gained conducting training on the revised curriculum for five years.

The training included all grade 1 teachers, even the teachers who may not have non-Lao speaking students in their class, to ensure that all grade 1 teachers can provide SLP when required in the future.

One of the Provincial Trainers explains "On Day 1, participants learned about language teaching techniques for children and effective methods to support their students' language learning. They also became familiar with the SLP teaching and learning materials. On Day 2, participants experienced some activities of the programme. They also created a paper puppet and practiced using it for an SLP activity demonstration. The Day 3 was also very active and hands-on with teachers preparing and delivering SLP activities in microteaching sessions, while pedagogical support staff were learning about tools and resources to support SLP teachers."



Additional opportunities to provide support to SLP teachers are being developed by the Ministry. A video explaining five techniques to teach students who do not speak Lao as their first language is already available on ວິດີໂອສຳລັບການພັດທະນາຄູ Teacher Development Videos YouTube channel.

A second video demonstrating three main activities of the Spoken Lao Programme was filmed last week and will be released soon. A specific SLP Teacher Support Pack is also under development.

Ms Hegarty concluded "Australia is proud to promote inclusive education and better learning outcomes for non-Lao speaking students. Australia strongly believes that improving the learning outcomes for girls and boys, especially those experiencing disadvantage, will have long-term positive outcomes for the development of Laos."

BEQUAL is a programme led by the Ministry of Education and Sports with support from the Australian Government and the United States Agency for International Development (USAID). The programme focuses on enhancing educational outcomes for the nation's youth, especially the vulnerable and disadvantaged. BEQUAL is focused on ensuring gender equality and promoting inclusive education across all activities.

# ນັກຮຽນຊົນເຜົ່າທີ່ບໍ່ເວົ້າພາສາລາວໃນຄອບຄົວ ຈະໄດ້ຮຽນຝຶກເວົ້າພາສາລາວ ໃນຂັ້ນ ປ1

09/09/2024 17:09

Email | Print | 647 | Like | Share

**ຂປລ** **ຂປລ. ສປປ ລາວ ເປັນປະເທດທີ່ອຸດົມສົມບູນ ທາງດ້ານວັດທະນະທຳ ແລະ ມີຄວາມຫລາກຫລາຍຂອງຊົນເຜົ່າ. ໃນນັ້ນ, ເກືອບ 40% ຂອງປະຊາກອນລາວ ເວົ້າພາສາເຜົ່າ ທີ່ບໍ່ແມ່ນພາສາລາວລຸ່ມ. ສະນັ້ນ, ຈຶ່ງເຮັດໃຫ້ ນັກຮຽນ ຂັ້ນ ປ1 ສ່ວນຫລາຍ ໂດຍສະເພາະຜູ້ທີ່ມາຈາກເຂດຫ່າງໄກ ແລະ ດ້ອຍໂອກາດ ເມື່ອເລີ່ມເຂົ້າຮຽນ ຂັ້ນ ປ1 ຍັງບໍ່ທັນມີທັກສະການປາກເວົ້າພາສາລາວ ເຮັດໃຫ້ນັກຮຽນເຫລົ່ານີ້ ບໍ່ເຂົ້າໃຈສິ່ງທີ່ຄູເວົ້າ.**

0 Like Share




ຂປລ. ສປປ ລາວ ເປັນປະເທດທີ່ອຸດົມສົມບູນ ທາງດ້ານວັດທະນະທຳ ແລະ ມີຄວາມຫລາກຫລາຍຂອງຊົນເຜົ່າ. ໃນນັ້ນ, ເກືອບ 40% ຂອງປະຊາກອນລາວ ເວົ້າພາສາເຜົ່າ ທີ່ບໍ່ແມ່ນພາສາລາວລຸ່ມ. ສະນັ້ນ, ຈຶ່ງເຮັດໃຫ້ ນັກຮຽນ ຂັ້ນ ປ1 ສ່ວນຫລາຍ ໂດຍສະເພາະຜູ້ທີ່ມາຈາກເຂດຫ່າງໄກ ແລະ ດ້ອຍໂອກາດ ເມື່ອເລີ່ມເຂົ້າຮຽນ ຂັ້ນ ປ1 ຍັງບໍ່ທັນມີທັກສະການປາກເວົ້າພາສາລາວ ເຮັດໃຫ້ນັກຮຽນເຫລົ່ານີ້ ບໍ່ເຂົ້າໃຈສິ່ງທີ່ຄູເວົ້າ. ສະນັ້ນ, ນັບແຕ່ສົກຮຽນ 2024-2025 ເປັນຕົ້ນໄປ, ນັກຮຽນ ຂັ້ນ ປ1 ທີ່ບໍ່ເວົ້າພາສາລາວເປັນຫລັກໃນຄອບຄົວ ຈະໄດ້ຮຽນບົດຮຽນ ຝຶກເວົ້າພາສາລາວ ເຊິ່ງບົດຮຽນໃໝ່ນີ້ຖືກພັດທະນາຂຶ້ນ ໂດຍສະຖາບັນຄົ້ນຄວ້າ ວິທະຍາສາດການສຶກສາກະຊວງສຶກສາທິການ ແລະ ກິລາ ໂດຍໄດ້ຮັບການສະໜັບສະໜູນຈາກ ລັດຖະບານອົດສະຕຣາລີ ແລະ ອົງການພັດທະນາສາກົນ ຂອງປະເທດສະຫະລັດ ອາເມລິກາ ໂດຍຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານໃນ ສປປ ລາວ (ແຜນງານບີຄວາ).




ບົດຮຽນຝຶກເວົ້າພາສາລາວ ສາມາດຈັດຕັ້ງປະຕິບັດໃນທຸກ ຂັ້ນຮຽນ ປ1 ທົ່ວປະເທດ ຂຶ້ນກັບລະດັບພື້ນຖານພາສາຂອງນັກຮຽນ ເມື່ອເລີ່ມຕົ້ນເຂົ້າຮຽນ. ຄູສອນ ຂັ້ນ ປ1, ຜູ້ອຳນວຍການ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ ຈະເລືອກວ່າ ຄວນສອນບົດຮຽນຝຶກເວົ້າພາສາລາວ ໃນໂຮງ ຮຽນຫລືບໍ່ ໂດຍອີງຕາມຄວາມຕ້ອງການຂອງນັກຮຽນ ຂັ້ນ ປ1, ບົດຮຽນຝຶກເວົ້າພາສາລາວ ແມ່ນບົດຮຽນເສີມນອກຈາກ ບົດຮຽນປົກກະຕິ ຕາມຕາຕະລາງຮຽນ ເຊິ່ງຈະມີບົດຮຽນທີ່ປະກອບຕື່ມ ແລະ ເຊື່ອມຕໍ່ໂດຍກົງກັບຫລັກສູດການຮຽນການສອນວິຊາພາສາລາວ ສຳລັບ ຂັ້ນ ປ1. ບົດຮຽນດັ່ງກ່າວ, ຈະເນັ້ນໃສ່ການພັດທະນາ ທັກສະການເວົ້າພາສາລາວ ໂດຍຜ່ານການຊ່ວຍເຫລືອ ໃນການເວົ້າ ແລະ ການຟັງ.




ທ່ານ ອານຸລົມ ວິໄລພອນ ຜູ້ອຳນວຍການສະຖາບັນຄົ້ນຄວ້າ ວິທະຍາສາດການສຶກສາ ກະຊວງສຶກສາທິການ ແລະ ກິລາ ໄດ້ກ່າວວ່າ: ນັບແຕ່ປີ 2019 ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບ ລັດຖະບານອົດສະຕຣາລີ ສ້າງຄວາມເຂັ້ມແຂງ ດ້ານວິຊາພາສາລາວ ໃຫ້ແກ່ນັກຮຽນ ທີ່ເລີ່ມເຂົ້າໂຮງຮຽນ ແຕ່ບໍ່ສາມາດເວົ້າພາສາລາວໄດ້ດີເທື່ອ ສື່ການຮຽນ-ການສອນ ຝຶກເວົ້າພາສາລາວທັງໝົດ ໄດ້ຖືກທົດລອງໃນຫລາຍແຂວງ ແລະ ໄດ້ຮັບການປັບປຸງນັບແຕ່ປີ 2019 ສະແດງໃຫ້ເຫັນວ່າ ວິທີການດັ່ງກ່າວ, ສົ່ງຜົນປະໂຫຍດແກ່ນັກຮຽນ ທີ່ຍັງບໍ່ທັນມີຄວາມສາມາດ ເວົ້າພາສາລາວໄດ້ດີເທື່ອ ແລະ ຊ່ວຍໃຫ້ເຂົາເຈົ້າໄດ້ຮຽນຮູ້ ຄຳສັບໃໝ່ຢ່າງມ່ວນຊື່ນ ແລະ ມີປະສິດທິພາບ. ສະນັ້ນ, ກະຊວງສຶກສາທິການ ແລະ ກິລາ ໄດ້ອະນຸມັດໃຫ້ບັນດາສື່ ການຮຽນ-ການສອນ ແລະ ບົດຮຽນຝຶກເວົ້າພາສາລາວ ໄດ້ນຳມາສິດ ສອນໃຫ້ນັກຮຽນຫ້ອງຮຽນ ຂັ້ນ ປ1 ໃນທົ່ວປະເທດ ນັບແຕ່ສົກຮຽນ 2024-2025 ນີ້ເປັນຕົ້ນໄປ.



ທ່ານ ນາງ ວາເນັດຊ້າ ເຮັກກາທໍ ເລຂາເອກ, ສະຖານທູດອົດສະຕຣາລີ ໄດ້ກ່າວວ່າ: ລັດຖະ ບານອົດສະຕຣາລີ ແລະ ກະຊວງສຶກສາທິການ ແລະ ກິລາ ໄດ້ຮ່ວມມືກັນທົດລອງ ວິທີການສິດສອນແບບໃໝ່ ເພື່ອເພີ່ມການເຂົ້າເຖິງຂອງ ເດັກໃນລະບົບການສຶກສາ ໂດຍສະເພາະແມ່ນເດັກນ້ອຍ ທີ່ດ້ອຍໂອກາດ ທີ່ເວົ້າພາສາອື່ນທີ່ບໍ່ແມ່ນພາສາລາວ ລຸ່ມຢູ່ເຮືອນ. ບົດຮຽນຝຶກເວົ້າພາສາລາວ ເປັນຕົວຢ່າງທີ່ດີຂອງວິທີການ ທົດລອງຂະໜາດນ້ອຍ ທີ່ປະສົບຜົນສຳເລັດ ສາມາດກາຍເປັນບົດຮຽນ ທີ່ໄດ້ຮັບການອະນຸມັດ ໃຫ້ສິດສອນໃນທົ່ວປະເທດ.




ປຶ້ມແບບຮຽນຝຶກເວົ້າພາສາລາວ ທີ່ມີສີສັນສວຍງາມ 184.680 ຫົວ, ປຶ້ມຄູ່ມືຄູພາສາລາວ 13.680 ຫົວ, ພ້ອມທັງສື່ການຮຽນ-ການສອນ ເສີມພາສາລາວ (ລວມມີ 13.680 ຊຸດ, ບັດນິທານ 27.200 ແຜ່ນ, ຊຸດເກມ ບິງໂກ 27.200 ຊຸດ) ໄດ້ຖືກແຈກຢາຍໃຫ້ບັນດາ ໂຮງຮຽນໃນທົ່ວປະເທດ ເພື່ອສະໜອງໃຫ້ແກ່ຄູສອນ ຂັ້ນ ປ1.

**2024-09-11** | **Vientiane Times Website**

LAO PRESS IN FOREIGN LANGUAGES

Vientiane Times

http://vientianetimes.org.la http://vientianetimeslao.la

Visit Laos Year 2024



## New Lao language programme rolled out in primary schools

The Ministry of Education and Sports has launched the new Spoken Lao Programme and made materials and teaching methods available to all Grade 1 classes in primary schools starting this school year.

In preparation for the national rollout, 184,680 colourful textbooks and 13,680 teacher guides, as well as supplementary teaching and learning materials, were distributed nationwide.



**A teacher introduces new teaching methods under the Spoken Lao Programme.**

These materials have been provided to Grade 1 teachers and will be available for all schools with non-Lao speaking students that are implementing the Spoken Lao Programme.

The programme was launched to ensure that all children receive the Lao language support they need when starting school.

It was developed by the Research Institute for Educational Sciences at the Ministry of Education and Sports with support from the Australian government and the United States Agency for International Development, through the Basic Education Quality and Access in Laos (BEQUAL) programme.

Spoken Lao Programme lessons are taught in addition to regular timetabled lessons, with lessons complementing and linking directly with the regular Grade 1 Lao language curriculum lessons.

The lessons aim to develop children's oral Lao language skills through speaking and listening practice.

Director General of the Research Institute for Educational Sciences, Associate Prof. Dr Anoulom Vilayphone, said "Since 2019, the education ministry and Australia have been working to strengthen Lao language skills for children who cannot speak Lao when they start school.

The materials have been thoroughly tested in several provinces and subsequently improved since 2019.

The overwhelming positive results demonstrated that this new approach benefits children who are not yet competent speakers of Lao and helps them to acquire new vocabulary in a fun and effective manner.

The education ministry decided to make Spoken Lao materials and teaching methods available to all Grade 1 classes nationwide starting this school year, Dr Anoulom said. First Secretary at the Australian Embassy, Ms Vanessa Hegarty, said "Australia and the education ministry collaborated to pilot new teaching methods to increase the inclusion of all children in the education system, especially disadvantaged children who speak a language other than Lao at home."

Almost 40 percent of the Lao population speak a language other than Lao.

The programme is a great example of how a successful small pilot can become a programme approved for teaching nationwide.

Ms Hegarty said "Australia is proud to promote inclusive education and better learning outcomes for non-Lao speaking students."

Australia strongly believes that improving the learning outcomes for girls and boys, especially those experiencing disadvantage, will have long-term positive outcomes for the development of Laos, she added.